ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

************************

ກະຊວງສາທາລະນະສຸກ

ເລກທີ 815 /ສທ

ນະຄອນຫຼວງວຽງຈັນ, ວັນທີ 03 OCT 2012

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການກະຊວງສາທາລະນະສຸກ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄ້ວາສ້າງມາດຕະຖານດ້ານພື້ນຖານໂຄງລ່າງ ແລະ ອຸປະກອນການແພດ ຂອງໂຮງໝໍເມືອງ ແລະ ສຸກສາລາ

- ອີງຕາມ : ດຳລັດຂອງນາຍຍົກລັດຖະມົນຕີ ເລກທີ 178/ນຍ , ລົງວັນທີ 05 ເມສາ 2012 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສາທາລະນະສຸກ.
- ອີງຕາມ : ໃບສະເໜີຂອງ ກົມປິ່ນປົວ ສະບັບເລກທີ 1543 / ກປປ, ລົງວັນທີ 18 ກັນຍາ 2012.
- ອີງຕາມ : ການຄົ້ນຄ້ວາ ແລະ ສະເໜີຂອງຫ້ອງການກະຊວງສາທາລະນະສຸກ.

## ລັດຖະມົນຕີວ່າການກະຊວງສາທາລະນະສຸກຕົກລົງ:

ມາດຕາ 1: ແຕ່ງຕັ້ງຄະນະຮັບຜິດຊອບ ຄົ້ນຄ້ວາສ້າງມາດຕະຖານ ດ້ານພື້ນຖານໂຄງລ່າງ ແລະ ອຸປະກອນການແພດ ຂອງໂຮງໝໍເມືອງ ແລະ ສຸກສາລາ, ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

I. ຄະນະຊີ້ນຳລວມ:

1. ທ່ານ ຮສ ດຣ. ບຸນກອງ ສີຫາວົງ — ລັດຖະມົນຕີຊ່ວຍວ່າການກະຊວງສາທາລະນະສຸກ
2. ທ່ານ ຮສຈ ດຣ. ຈັນພົມມາ ວົງສຳພັນ — ຫົວໜ້າກົມປິ່ນປົວ

ພາລະບົດບາດ ແລະ ໜ້າທີ່:

ໃຫ້ການຊີ້ນຳ, ນຳພາ ແລະ ຊຸກຍູ້ໃນການຈັດຕັ້ງປະຕິບັດວຽກງານຄົ້ນຄວ້າສ້າງມາດຕະຖານ ດ້ານພື້ນຖານໂຄງລ່າງ ແລະ ອຸປະກອນການແພດ ຂອງໂຮງໝໍເມືອງ ແລະ ສຸກສາລາ ໃຫ້ສຳເລັດຕາມຄາດໝາຍ.

II. ຄະນະຊີ້ນຳດ້ານວິຊາການ :

1. ທ່ານ ດຣ. ບຸນໜັກ ໄຊຊະນະສົງຄາມ — ຮອງຫົວໜ້າ ກົມປິ່ນປົວ
2. ທ່ານ ດຣ. ພິສິດ ພຸດສະຫວັດ — ຮອງຫົວໜ້າກົມປິ່ນປົວ

ພາລະບົດບາດ ແລະ ໜ້າທີ່:

ໃຫ້ການຊີ້ນໍາ, ນໍາພາ, ຕິດຕາມ ແລະ ວາງແຜນການຈັດຕັ້ງປະຕິບັດຕົວຈິງ ກ່ຽວກັບ ການຄົ້ນຄວ້າສ້າງມາດຕະຖານດ້ານ ພື້ນຖານໂຄງລ່າງ ແລະ ອຸປະກອນການແພດ ຂອງໂຮງໝໍເມືອງ ແລະ ສຸກສາລາ, ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງອົງການຈັດຕັ້ງສາກົນ ແລະ ໂຄງການໃຫຍ່ທີ່ກ່ຽວຂ້ອງຕ່າງໆ ເພື່ອຊຸກຍູ້ວຽກງານດັ່ງກ່າວ ໃຫ້ສໍາເລັດຕາມແຜນການທີ່ວາງໄວ ແລ້ວລາຍງານຄວາມຄືບໜ້າຂອງວຽກງານໃຫ້ຄະນະຊີ້ນໍາລວມເປັນແຕ່ລະໄລຍະ.

III. ຄະນະຮັບຜິດຊອບດ້ານວິຊາການ:

| | |
|---|---|
| 1. ທ່ານ ດຣ. ບົວຂັນ ພະຄຸນທອງ | ຫົວໜ້າ ພະແນກໂຮງໝໍສູນກາງ, ພາກ ແລະ ແຂວງ, ກົມປິ່ນປົວ |
| 2. ທ່ານ ບຸນຍືນ ແກ້ວມະນີຣັກ | ວ່າການຫົວໜ້າ ພະແນກຊັບສິນ ແລະ ເຮືອນຫຼວງ, ກົມການເງິນ |
| 3. ທ່ານ ດຣ. ສົມຈັນ ທູນສະຫວັດ | ຮອງຫົວໜ້າ ພະແນກເຕັກນິກການແພດ, ກົມປິ່ນປົວ |
| 4. ທ່ານ ດຣ. ສີສຸພັນ ຫຼວງລາດ | ຮອງຫົວໜ້າ ພະແນກບໍລິຫານ, ກົມປິ່ນປົວ |
| 5. ທ່ານ ດຣ. ມະນີວັນ ສະຫວັດດີ | ວິຊາການ ພະແນກໂຮງໝໍສູນກາງ, ພາກ ແລະ ແຂວງ, ກົມປິ່ນປົວ |
| 6. ທ່ານ ຄໍາມ້າວ ໄຊຍະມຸງຄຸນ | ວິຊາການ ພະແນກເຕັກນິກການແພດ, ກົມປິ່ນປົວ |
| 7. ທ່ານ ແສງດາວ ອິນທະປະຖາ | ຫົວໜ້າ ພະແນກສ້ອມແປງ, ສູນສະໜອງຢາ ແລະ ອຸປະກອນການແພດ |
| 8. ທ່ານ ສິນທະລາ ປະທໍາມະວົງ | ຫົວໜ້າ ຂະແໜງຂະຫຍາຍຕາໜ່າງສາທາລະນະສຸກ, ໂຄງການ ຜງ-ພລສ |
| 9. ທ່ານ ບຸນສະຖຽນ ພິມມະເສນ | ຫົວໜ້າ ໜ່ວຍງານຈັດຊື້, ໂຄງການ ຍຄສ-ສືບຕໍ່. |

ພາລະບົດບາດ ແລະ ໜ້າທີ່:

ມີໜ້າທີ່ຄົ້ນຄ້ວາສ້າງຮ່າງມາດຕະຖານ ດ້ານພື້ນຖານໂຄງລ່າງ ແລະ ອຸປະກອນການແພດ ຂອງໂຮງໝໍເມືອງ ແລະ ສຸກສາລາ ໂດຍອີງໃສ່ພາລະບົດບາດທີ່ມີຢູ່, ສົມທົບກັບຂໍ້ມູນມາດຕະຖານຂອງສາກົນ ແລະ ບັນດາໂຄງການໃຫຍ່ຕ່າງໆຂອງກະຊວງສາທາລະນະສຸກ ແລະ ເງື່ອນໄຂຄວາມສາມາດຕົວຈິງຂອງໂຮງໝໍເມືອງ ແລະສຸກສາທີ່ມີຢູ່ໃນປະຈຸບັນ, ພ້ອມທັງຈັດກອງປະຊຸມປັບປຸງຮ່າງມາດຕະຖານດັ່ງກ່າວ ໃຫ້ຄົບຖ້ວນສົມບູນແບບ ແລະຖືກຮັບຮອງເອົາ, ສາມາດນໍາໄປເຜີຍແຜ່ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິ ບັດວຽກງານຕົວຈິງ.

IV. ຄະນະຮັບຜິດຊອບປະສານງານ, ກອງເລຂາ:

| | |
|---|---|
| 1. ທ່ານ ດຣ. ທອງສະຫວັນ ແສງກົງດາລາ | ວິຊາການພະແນກໂຮງໝໍທ້ອງຖິ່ນ, ກົມປິ່ນປົວ |
| 2. ທ່ານ ດຣ.ນ ວັນແສງ ສີໂຄດຈຸນລະມາລີ | ວິຊາການພະແນກໂຮງໝໍທ້ອງຖິ່ນ, ກົມປິ່ນປົວ |
| 3. ທ່ານ ນ ອໍລະພິມ ພຸດທະວົງ | ວິຊາການ ພະແນກພະຍາບານ, ກົມປິ່ນປົວ |
| 4. ທ່ານ ທະນູໄຊ ອ່ອນຈະເລີນສຸກ | ວິຊາການ ການເງິນ ພະແນກບໍລິຫານ, ກົມປິ່ນປົວ |

ພາລະບົດບາດ ແລະ ໜ້າທີ່:

ມີໜ້າທີ່ຕິດຕໍ່ປະສານງານກັບພາກສ່ວນທີ່ກ່ຽວຂ້ອງຂອງສູນກາງ, ທ້ອງຖິ່ນ ແລະ ພາກສ່ວນທີ່ໃຫ້ທຶນ ເພື່ອກະກຽມຈັດກອງປະຊຸມ, ບັນທຶກກອງປະຊຸມ, ເຮັດບົດສະຫຼຸບສັງລວມ ແລ້ວລາຍງານຕໍ່ຂັ້ນເທິງ, ຈັດພິມເອກະສານ ແລະ ອໍານວຍຄວາມສະດວກອື່ນໆ ຕາມການແນະນໍາຂອງຄະນະຊີ້ນໍາ ແລະ ຄະນະຮັບຜິດຊອບດ້ານວິຊາການ.

ມາດຕາ 2 : ໃຫ້ຫ້ອງການກະຊວງ, ກົມປິ່ນປົວ, ບັນດາທ່ານທີ່ຖືກແຕ່ງຕັ້ງ ແລະ ການຈັດຕັ້ງທີ່ກ່ຽວ ຂ້ອງຈົ່ງພ້ອມກັນປະຕິບັດຕາມຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ຂອງໃຜລາວ.

ມາດຕາ 3 : ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ບ່ອນນໍາສົ່ງ:

- ຫ້ອງການກະຊວງ 01 ສະບັບ
- ກົມປິ່ນປົວ 01 ສະບັບ
- ພາກສ່ວນທີ່ກ່ຽວຂ້ອງ 01 ສະບັບ
- ພວກກ່ຽວທ່ານລະ 01 ສະບັບ
- ສໍາເນົາ 02 ສະບັບ

ສາດສະດາຈານ ດຣ.ເອກສະຫວ່າງ ວົງວິຈິດ